ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມສົ່ງເສີມການລົງທຶນທົ່ວໄປ

ເລກທີ 0 1 5 8/ສລທ.ອຣະ

ນະຄອນຫຼວງວຽງຈັນ, ວັນທີ 06 MAR 2012

ເຖິງ : ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

ເລື່ອງ : ຂັ້ນຕອນການຈໍລະຈອນ ເອກະສານກ່ຽວກັບການແຈ້ງຂຶ້ນ ແລະ ການປ່ຽນແປງເນື້ອໃນທະບຽນວິສາຫະກິດ

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍວຽກງານສາລະບັນ;
- ອີງໃສ່ຂໍ້ຕົກລົງ, ເລກທີ 0030/ອຄ.ຈພງ, ລົງວັນທີ 5 ມັງກອນ 2012, ວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກົມສົ່ງເສີມການລົງທຶນທົ່ວໄປ.

ບົນພື້ນຖານຈຸດພິເສດຂອງວຽກງານການຂຶ້ນທະບຽນວິສາຫະກິດ ຊຶ່ງຖືກກຳນົດເວລາ ທີ່ຕ້ອງສຳເລັດໂດຍມີຜົນຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຄວາມຮັບຜິດຊອບດັ່ງກ່າວ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ເພື່ອຮັບປະກັນຄວາມສະດວກ ວ່ອງໄວຂອງວຽກງານ ພາຍໃຕ້ລະບົບບໍລິການປະຕູດຽວ ສຳລັບການລົງທຶນໃນກິດຈະການທົ່ວໄປ.

ກົມສົ່ງເສີມການລົງທຶນທົ່ວໄປ ແຈ້ງມາຍັງພະແນກອຸດສາຫະກຳແລະການຄ້າຂັ້ນແຂວງ ໂດຍສະເພາະຂະແໜງສົ່ງເສີມການລົງທຶນທົ່ວໄປ ເພື່ອຊາບ ແລະ ປະຕິບັດຂັ້ນຕອນການຈໍລະຈອນເອກະສານກ່ຽວກັບທະບຽນວິສາຫະກິດ ດັ່ງນີ້ :

1. ທຸກເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ, ການປ່ຽນແປງເນື້ອໃນທະບຽນວິສາຫະກິດ, ການ ຍຸບເລີກຂອງວິສາຫະກິດ (ລວມທັງສາຂາວິສາຫະກິດ)ແມ່ນໃຫ້ຍື່ນໂດຍກົງຕໍ່ຂະແໜງສົ່ງເສີມການລົງທຶນທົ່ວໄປ ເພື່ອກວດສອບຄວາມຖືກຕ້ອງເນື້ອໃນທາງດ້ານກົດໝາຍຂອງເອກະສານ ກ່ອນຮັບເອກະສານດັ່ງກ່າວເປັນທາງການ ;

2. ຫຼັງຈາກກວດລອບ ເຫັນວ່າ ເອກະສານຖືກຕ້ອງ ໃຫ້ຂະແໜງສົ່ງເສີມການລົງທຶນທົ່ວໄປ ເປັນຜູ້ຮັບ ບັນດາເອກະສານດັ່ງກ່າວ (ເປັນທາງການ) ເພື່ອນຳເຂົ້າສູ່ຂັ້ນຕອນການພິຈາລະນາເອກະສານ ພາຍໃຕ້ລະບົບບໍລິການປະຕູດຽວ ແລະ ຕາມຂໍ້ກຳນົດຂອງລະບຽບ ກົດໝາຍຕໍ່ໄປ;

3. ຫຼັງຈາກເອກະສານແຈ້ງຂຶ້ນ ຫຼື ປ່ຽນແປງເນື້ອໃນທະບຽນວິສາຫະກິດ ໄດ້ຮັບການພິຈາລະນາເຫັນດີຜ່ານລະບົບບໍລິການປະຕູດຽວສຳລັບການລົງທຶນໃນກິດຈະການທົ່ວໄປ ຢ່າງຖືກຕ້ອງ, ຄົບຖ້ວນແລ້ວ ແມ່ນໃຫ້ຂະແໜງສົ່ງເສີມການລົງທຶນທົ່ວໄປ ຍື່ນຂໍອະນຸມັດລາຍເຊັນ ຈາກຜູ້ທີ່ໄດ້ຮັບມອບໝາຍສິດໃນການເຊັນໃບທະບຽນວິສາຫະກິດໂດຍໄວ.

4. ໃນກໍລະນີເອກະສານຂໍເລກລະຫັດທະບຽນວິສາຫະກິດ ແລະ ຈອງຊື່ວິສາຫະກິດ ຂອງພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ ແມ່ນໃຫ້ຍື່ນໂດຍກົງຫາ ຂະແໜງສົ່ງເສີມການລົງທຶນທົ່ວໄປ (ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ) ເພື່ອ:

- ສຳລັບເອກະສານຂໍເລກລະຫັດທະບຽນວິສາຫະກິດ ແມ່ນໃຫ້ຂະແໜງສົ່ງເສີມການລົງທຶນທົ່ວໄປ (ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ) ເປັນຜູ້ອອກໃຫ້ເລີຍ;
- ສຳລັບເອກະສານຈອງຊື່ວິສາຫະກິດ ແມ່ນໃຫ້ຂະແໜງສົ່ງເສີມການລົງທຶນທົ່ວໄປ ປະສານກັບຫ້ອງການຖານຂໍ້ມູນວິສາຫະກິດແຫ່ງຊາດ (ກົມສົ່ງເສີມການລົງທຶນທົ່ວໄປ) ເພື່ອກວດກາ ແລະ ອະນຸມັດຊື່ວິສາຫະກິດ ກ່ອນແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ.

5. ຂັ້ນຕອນການຈໍລະຈອນເອກະສານກ່ຽວກັບການແຈ້ງຂຶ້ນ ແລະ ການປ່ຽນແປງເນື້ອໃນທະບຽນວິສາຫະກິດສຳລັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ເປັນຜູ້ກຳນົດ ຕາມເງື່ອນໄຂຕົວຈິງ ແນໃສ່ຮັບປະກັນຄວາມສະດວກວ່ອງໄວໃນການບໍລິການຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນ ຫລື ປະຊາຊົນບັນດາເຜົ່າ.

ແຈ້ງມາເພື່ອຊາບ ແລະ ນຳໃຊ້ເຂົ້າໃນຈັດຕັ້ງປະຕິບັດ .

ຫົວໜ້າກົມສົ່ງເສີມການລົງທຶນທົ່ວໄປ